# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 12 ສິງຫາ 2007 (8-12-2007)

## <u>ໃນເມື່ອທ່ານໝົດກຳລັງໃຈ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** 1 ກະສັດ 19:1-13

**<u>ຄຳຖາມຊີວິດ:</u>** ຈະເຮັດແນວໃດໃນເມື່ອຂ້າພະເຈົ້າໝົດກຳລັງໃຈໃນການຮັບໃຊ້ພຣະເຈົ້າ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ນິມິດໃໝ່ຈາກຣັສມີຂອງພຣະເຈົ້າຈະຊ່ອຍໃຫ້ຜູ້ທີ່ເຊື່ອມີກຳລັງໃຈຂຶ້ນມາ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອໃຫ້ທ່ານຮູ້ວ່າພຣະເຈົ້າຈະຊ່ອຍທ່ານໃນເມື່ອພົບກັບສະພາບການທີ່ໜັກໜ່ວງ:

- ສຳຣວດເບິ່ງວ່າແມ່ນຫຍັງເຮັດໃຫ້ທ່ານໝົດກຳລັງໃຈ.
- ການປາຖນາຢາກມີນິມິດໃໝ່ຈາກຣັສມີ ແລະຈຸດປະສົງຂອງພຣະເຈົ້າ.

ທ່ານ ໄມໂກບໍ່ເຄີຍປະສົບການກັບຄວາມໝົດກຳລັງຫລາຍທີ່ສຸດໃນວັນນັ້ນ ຈົນນາຍໃຫຍ່ໄດ້ຊ່ອຍກູ້ໃຫ້ລາວໄດ້ຮັບຊັ້ນເກົ່າຄືນ. ວັນນຶ່ງເວລາລາວກັບບ້ານ ລາວມີສີໜ້າເສົ້າໆ. ນາງຊາຣາຜູ້ເປັນເມັຽໄດ້ເຂົ້າມາໃກ້ລາວ ແລ້ວກໍຍື່ນຈົດໝາຍຊຶ່ງເປັນການຂໍຮ້ອງຈາກສາສນາທູດຈາກຕ່າງປະເທດໃຫ້ອ້ອນວອນເພື່ອ. ໃນເມື່ອລາວໄດ້ອ່ານຈົດໝາຍນັ້ນແລ້ວ ລາວກໍຮູ້ສຶກວ່າບັນຫາທີ່ລາວມີນັ້ນນ້ອຍຫລາຍ ຖ້າຈະເອົາມາທຽບກັບສະພາບການທີ່ສາສນາທູດໄດ້ປະເຊີນ. ລາວກໍໄດ້ຢຸດຊະງັກໃຊ້ເວລາອ້ອນວອນເພື່ອສາສນາທູດນັ້ນ, ຂອບຄຸນຕໍ່ພຣະເຈົ້າທີ່ລາວຍັງມີວຽກເຮັດ ແລະທູນຂໍໃຫ້ພຣະເຈົ້າອວຍພຣະພອນແກ່ສາສນາທູດເຫລົ່ານັ້ນ.

ການໝົດກຳລັງໃຈສາມາດເຂົ້າມາໂຈມຕີພວກເຮົາໄດ້ທຸກໆເວລາ. ຄົນຂອງພຣະເຈົ້າບໍ່ໄດ້ພົ້ນຈາກຄວາມຮູ້ສຶກທີ່ໝົດກຳລັງໃຈເໝືອນດັ່ງຄົນອື່ນໆ. ຄວາມຈິງແລ້ວ ການໝົດກຳລັງໃຈທາງດ້ານຄວາມເຊື່ອນັ້ນອາດເຂົ້າມາໃນຊີວິດຢ່າງວອງໄວ້ໄດ້. ມັດອາດເຂົ້າມາໂດຍທີ່ເຮົາບໍ່ຮູ້ສຶກຕົວ. ຜູ້ທີ່ເຊື່ອທີ່ກຳລັງປະເຊີນກັບຄວາມໝົດກຳລັງໃຈນັ້ນຈະມີຜູ້ໃດເຂົ້າມາຊ່ອຍບໍ່? ຄຳຕອບຄືວ່າມີຜູ້ຊ່ອຍໄດ້.

## <u>ສຶກສາພຣະຄັມພີ</u>

### 1. <u>ໃຫ້ຮູ້ຈັກ</u> (1 ກະສັດ 19:1-3)

ການທີ່ຈະຂຶ້ນໄປເຖິງຈອມພູສູງນັ້ນຈຳເປັນຕ້ອງຂຶ້ນຜ່ານຕີນພູກ່ອນຊຶ່ງເປັນບ່ອນຫລາຍຄົນໝົດກຳລັງໃຈ. ຜູ້ປະກາດ ເອລີຢາໄດ້ປະເຊີນກັບ 850 ຄົນທີ່ເປັນຜູ້ປະກາດປອມ. ເທິງພູກາເມນ ເອລີຢາໄດ້ເຊີນໃຫ້ຜູ້ປະກາດພະບາອານຊຶ່ງເປັນຜູ້ເປັນຜູ້ປະກາດປອມ ບອກໃຫ້ພຣະຂອງພວກເຂົາສົ່ງໄຟລົງມາໃສ່ແທ່ນບູຊາ. ໃນເມື່ອພວກເຂົາເຮັດບໍ່ໄດ້ ເອລີຢາໄດ້ອ້ອນວອນຕໍ່ອົງພຣະຜູ້ເຈົ້າໃຫ້ສະແດງອຳນາດ ໄຟໄດ້ຕົກລົງມາໃສ່ເຄື່ອງບູຊາທີ່ໄດ້ຖວາຍບູຊາເທິງແທ່ນນັ້ນ. ຝູງຄົນທັງຫລາຍຈຶ່ງປະກາດວ່າພຣະອົງເຈົ້າເປັນພຣະເຈົ້າຂອງພວກເຂົາ ແລະພວກເຂົາໄດ້ຂ້າຜູ້ປະກາດປອມ (1 ກະສັດ 18). ໃນເວລາຕໍ່ມາໄຊຊະນະນັ້ນໄດ້ກາຍເປັນຄວາມຢ້ານແລະໝົດກຳລັງໃຈໃນເມື່ອພັລຍາຂອງຜູ້ປະກາດພຣະທຳປອມວາງແຜນແກ້ແຄ້ນ.

ໝາຍເຫດໃຫ້ເບິ່ງລັກສະນະຂອງແຕ່ລະຄົນໃນເຣື່ອງນີ້. ກະສັດອາແຮບຜູ້ເປັນເຈົ້າຊີວິດ ແຕ່ບໍ່ໄດ້ອອກຄຳສັ່ງອັນໃດ ເພາະເພິ່ນເປັນກະສັດຊົ່ວຮ້າຍ, ອ່ອນແອ, ແລະເຫັນແກ່ຕົວ. ກະສັດອາແຮບຄວນຍອມຕໍ່ອົງພຣະຜູ້ເປັນເຈົ້າໂດຍເຮັດຕາມຄຳຜູ້ປະກາດພຣະທັມເອລີຢາ ຄືເຮັດໃຫ້ຊາດຂອງຕົນບໍຣິສຸດ. ແຕ່ເພິ່ນໄດ້ມອບອຳນາດໃຫ້ມະເຫສີ. ສ່ວນມະເຫສີ **ເຈຊາເບນ** ເປັນຄົນມັກໃຫຍ່ໄຝ່ສູງ. ໃນເມື່ອອາແຮບໄດ້ບອກນາງວ່າ **ຜູ້ປະກາດພຣະທັມ ເອລີຢາ ໄດ້ຂ້າຜູ້ປະກາດ**ປອມຂອງນາງໝົດ ນາງກໍມີໃຈໂກດຮ້າຍຂຶ້ນ, ນາງໄດ້ສາບານວ່າຕ້ອງແກ້ແຄ້ນ. ນາງໄດ້ໄດ້ສົ່ງຂ່າວໄປບອກຜູ້ປະກາດພຣະທັມເອລີຢາ ແລະບອກວ່າຈະແກ້ແຄ້ນດ້ວຍເອົາຊີວິດຂອງທ່ານ. ນາງໄດ້ບອກເຖິງວັນເວລາທີ່ຈະຂ້າແກ້ແຄ້ນແທນຜູ້ປະກາດພຣະທັມປອມຂອງນາງ. ຜູ້ປະກາດພຣະທັມເອລີຢາ**ເກີດຄວາມຢ້ານອັນໃຫຍ່**. ຜູ້ປະກາດພຣະທັມທີ່ໄດ້ປະເຊີນກັບ 850 ຄົນຊຶ່ງເປັນຜູ້ປະກາດປອມ ແລະເອົາຊະນະໄດ້ມາແລ້ວ ແຕ່ໃນເວລານີ້ເພິ່ນ**ແລ່ນໜີອອກໄປເພື່ອເອົາຕົວລອດ** ເພາະຄຳເວົ້າຄຳດຽວຂອງຍິງຊົ່ວຮ້າຍນັ້ນ.

ດັ່ງນັ້ນແຫລະ ເຖິງແມ່ນຜູ້ມີຄວາມເຊື່ອດີກໍຍັງໄດ້ປະສົບກັບຄວາມໝົດກຳລັງໃຈ. ຈາກປະວັດຕ່າງໆຂອງຜູ້ຮັບໃຊ້ຫລາຍໆຄົນກໍໄດ້ບອກວ່າພວກເຂົາໄດ້ພົບກັບຄວາມໝົດກຳລັງໃຈ, ຄວາມຮູ້ສຶກນ້ອຍເນື້ອຕ່ຳໃຈເລື້ອຍໆ. ໃນເມື່ອພວກເຮົາໄດ້ມີຄວາມຮູ້ດັ່ງກ່າວມານີ້ ມານກໍມັກເຂົ້າໂຈມຕີໃນເມື່ອເຮົາບໍ່ມີກຳລັງໃຈທີ່ຈະຮັບໃຊ້ຕໍ່ໄປ. ພວກເຮົາບໍ່ຄວນເຮັດໃຫ້ມີຄວາມສົງສັຍ ຄວາມຢ້ານເກີດຂຶ້ນ, ພວກເຮົາຕ້ອງໝັ້ນໃຈວ່າພຣະເຈົ້າຍັງຢູ່ກັບເຮົາ ເພື່ອຈະຊ່ອຍເຮົາໃນທຸກໆບັນຫາຂອງຊີວິດ.

## ໒. <u>ເລີ້ມຕົ້ນໃໝ່</u> (1 ກະສັດ 19: 3-9)

ໃນເມື່ອປະສົບກັບຄວາມໝົດກຳລັງໃຈ ພວກເຮົາຄວນເລີ້ມໃຫ້ຮ່າງກາຍ, ຄວາມນຶກຄິດ ແລະທາງຄວາມເຊື່ອມີແຮງຂຶ້ນມາອີກໃໝ່. ຜູ້ປະກາດພຣະທັມເອລີຢາໄດ້ແລ່ນໜີຈາກມືຂອງມະເຫສີໄດ້, ແຕ່ແລ່ນໜີໄປຈາກພຣະຫັດຂອງພຣະເຈົ້າບໍ່ໄດ້.

ເມື່ອມາເຖິງ **ແບຊີບາ** ໃກ້ຊາຍແດນພາກໃຕ້ຂອງເມືອງ **ຢູດາ**, ເອລີຢາໄດ້ສັ່ງໃຫ້ຄົນໃຊ້ພັກຢູ່ຫັ້ນ ສ່ວນຕົວເອງໄດ້ເດີນໄປອີກວັນນຶ່ງເຂົ້າໃນ**ປ່າຖິ່ນຊາຍ**. ມີນັກປາດໄດ້ກ່າວວ່າ ເອລີຢາໄດ້ປະພວກຄົນໃຊ້ໄວ້ທີ່ນັ້ນເພື່ອປ້ອງກັນຕົນເອງ ຈາກຄວາມຫວ່າງເປົ່າຂອງທະເລຊາຍ ຫລືຈາກການຈາຂ້າຂອງນາງ ເຈຊາເບນ. ບາງເທື່ອເອລີຢາອາດຕ້ອງການຢູ່ຄົນດຽວ ເພາະຜູ້ທີ່ກຳລັງໝົດກຳລັງໃຈບໍ່ຄ່ອຍມັກຢູ່ກັບກຸ່ມຝູງຊົນ.

ເອລີຢາຮູ້ສຶກວ່າການຮັບໃຊ້ຂອງເຂົາບໍ່ໄດ້ເກີດຜົນອັນໃດ. ໃນຖ້າມກາງຄວາມໝົດກຳລັງໃຈເຮັດໃຫ້ລາວບໍ່ໄດ້ມອງເຫັນວິທີທາງຂອງພຣະເຈົ້າອັນມະຫັດສະຈັນນັ້ນໄດ້. ລາວໄດ້ນັ່ງລົງກ້ອງ**ຕົ້ນໄມ້ໃຫຍ່**ທີ່ເກີດໃນກາງທະເລຊາຍ. ໃນທີ່ນັ້ນລາວ**ອ້ອນວອນ**ຕໍ່ພຣະເຈົ້າວ່າລາວ**ຢາກຕາຍ**. ລາວໄດ້ຕໍ່ວ່າ ວ່າລາວເອງບໍ່ມີຫຍັງດີໄປກວ່າພໍ່ແມ່ໃນສມັຍກ່ອນ.

ການທີ່ ເອລີຢາ ຮູ້ສຶກໝົດກຳລັງໃຈໄດ້ເກີດມາຈາກບັນຫາຂອງຄວາມເຊື່ອໃນພຣະເຈົ້າ, ຈາກຄວາມຮູ້ສຶກສັບສົນ, ເກີດຈາກການອ່ອນເພັຽຂອງຮ່າງກາຍ. ເອລີຢາ ເມື່ອຍທັງຈິດໃຈແລະຮ່າງກາຍ ເລີຍນອນຫລັບຢູ່ກ້ອງຕົ້ນໄມ້ໃຫຍ່. ລາວອາດໄດ້ເດີນທາງໄກໄດ້ຫລາຍວັນມາແລ້ວ ໂດຍບໍ່ກິນຫຍັງແລະພັກຜ່ອນ. ການທີ່ບໍ່ໄດ້ນອນ, ເມື່ອຍ ແລະຫິວສາມາດເຮັດໃຫ້ຄົນທີ່ມີກຳລັງແຂງແຮງເຂົ້າໄປສູ່ຄວາມໝົດຫວັງໄດ້. ເອລີຢາຕ້ອງການໄດ້ຮັບການເລີ້ມຕົ້ນໃໝ່ແທ້ໆ.

ພຣະເຈົ້າໄດ້ສົ່ງເທວະດາລົງມາຫາຜູ້ປະກາດພຣະທັມໂດຍນຳເອົາອາຫານແລະນ້ຳດື່ມມາໃຫ້. ເວລາເອລີຢາຕື່ນຈາກນອນ ເພິ່ນໄດ້ພົບເຫັນ**ເຂົ້າຈີ່ປີ້ງໃໝ່ງ**ແລະ**ຈອກນ້ຳ**ຕັ້ງຢູ່ທາງຫົວ. ເມື່ອກິນອີ່ມແລ້ວເພິ່ນກໍໄດ້**ນອນລົງອີກ**. ຫລັງຈາກໄດ້ພັກຜ່ອນລະຍະນຶ່ງແລ້ວ ເທວະດາກໍໄດ້ປຸກໃຫ້ເພິ່ນລຸກແລະສັ່ງໃຫ້ເພິ່ນກິນອາຫານ.

ອາຫານການກິນແລະການພັກຜ່ອນໄດ້ໃຫ້ກຳລັງແກ່ເອລີຢາເພື່ອເພິ່ນຈະໄດ້ເດີນທາງອີກເປັນເວລາ **40 ມື້ 40 ຄືນ** ກ່ອນຈະໄປເຖິງຈຸດຄື **ຫໍເຣັບ** ທີ່ຢູ່ທາງພາກເໜືອນຂອງພູຊີນາອີ, ຫໍເຣັບເປັນບ່ອນທີ່ພຣະເຈົ້າໄດ້ສະແດງຕົວເອງຕໍ່

ໂມເຊ (ອົບພະຍົບ 3:1-6). ຍັງເປັນບ່ອນທີ່ພຣະເຈົ້າໄດ້ເປີດຕົວເອງຕໍ່ພວກອິສຣາເອນ ໂດຍໃຫ້ນໍ້າອອກຈາກກ້ອນຫີນ (17:6) ແລະພຣະອົງໄດ້ຊົງສັນຍາກັບພວກເຂົາໃນບ່ອນນັ້ນ. ( 2 ພຣະບັນຍັດ 5:1).

ຫລັງຈາກການເດີນທາງອັນຍາວໄກ ເອລີຢາ ຕ້ອງການເວລາຢູ່ກັບພຣະເຈົ້າ. ເພິ່ນໄດ້ພັກ**ຄ້າງຄືນໃນຖໍ້າ** ເທິງ**ພູເຂົາຂອງພຣະເຈົ້າ.** ໃນເມື່ອພວກເຮົາບໍ່ເອົາຫົວຊາຕໍ່ການພັກຜ່ອນ ແລະກິນອາຫານເປັນເວລາຫລາຍວັນ ພວກເຮົາຍ່ອມມີຄວາມຮູ້ສຶກບໍ່ສະບາຍ, ເວລາພວກເຮົາໄດ້ປະເຊີນກັບຄວາມກົດດັນຂອງຊີວິດ ພວກເຮົາຕ້ອງການເລີ້ມຕົ້ນໃໝ່ທາງດ້ານຮ່າງກາຍແລະຈິດວິນຍານໃນຄວາມເຊື່ອ. ນອນພັກຜ່ອນ, ກິນອາຫານດີ. ຍິ່ງໄປກວ່ານັ້ນໃຫ້ໃຊ້ເວລາກັບພຣະເຈົ້າເປັນທາງສ່ວນຕົວ.

## 3. <u>ປະເມີນຜົນ</u> (1 ກະສັດ 19:9-13)

ໃນເມື່ອ ເອລີຢາ ໄດ້ເລີ້ມຕົ້ນໃໝ່ດ້ານຮ່າງກາຍ, ພຣະເຈົ້າໄດ້ເຮັດໃຫ້ເອລີຢາປະເມີນຜົນງານຂອງຕົນເອງ. ພຣະເຈົ້າບໍ່ໄດ້ຕ້ອງການໃຫ້ ເອລີຢາບອກວ່າຕົນເອງ**ກໍາລັງເຮັດຫຍັງ** ພຣະອົງໄດ້ຮູ້ຈັກທຸກສິ່ງໃນເຣື່ອງຊີວິດຂອງເອລີຢາ. ພຣະອົງຕ້ອງການໃຫ້ເອລີຢາພິຈາຣະນາເບິ່ງວິທີທາງຂອງພຣະອົງ.

ຄວາມຕອບຂອງ ເອລີຢາ ໄດ້ບອກເຖິງການໝົດກໍາລັງໃຈໃນຊີວິດ. ເພິ່ນຄິດວ່າເພິ່ນໄດ້ເຮັດທຸກສິ່ງທຸກຢ່າງຖືກຕ້ອງໝົດ ແລະເຫັນວ່າຄົນອື່ນນັ້ນໄດ້ເຮັດຜິດໝົດ. ເພິ່ນຄິດວ່າມີແຕ່ເພິ່ນຄົນດຽວທີ່ຍັງມີຊີວິດຢູ່ນັ້ນໄດ້ຮັບໃຊ້ພຣະເຈົ້າ ແລະ**ຊີວິດຂອງເພິ່ນ**ເອງກໍາລັງໄດ້ຮັບພັຍອັນຕະລາຍ. ເພິ່ນຮູ້ສຶກວ່າເພິ່ນໄດ້ຮັບໃຊ້ພຣະເຈົ້າຢ່າງເອົາໃຈໃສ່ ແຕ່ພວກອິສຣາເອນໄດ້ປະຖິ້ມພຣະສັນຍາຂອງພຣະອົງ, ທໍາລາຍແທ່ນບູຊາ, ຂ້າຜູ້ປະກາດພຣະທັມ. ແນ່ນອນ ຄວາມຊັດຊື່ຂອງເອລີຢານັ້ນຖືກຕ້ອງດີ ແລະຄວາມບາບຂອງພວກອິສຣາເອນໄດ້ມີຢ່າງມາກມາຍ.

ເອລີຢາ ຕ້ອງການຈົດຈໍ່ຈິດໃຈຂອງຕົນເອງຕໍ່ອົງພຣະເຈົ້າ. ພຣະເຈົ້າໄດ້ສັ່ງເພິ່ນໃຫ້ອອກຈາກຖໍ້າ ແລະ**ຢືນຂຶ້ນເທິງພູຕໍ່ພຣະພັກຂອງພຣະເຈົ້າ.** ໃນເມື່ອພວກເຮົາໄດ້ປົບໜີເຂົ້າໄປໃນຖໍ້າຂອງພວກເຮົາ ເພື່ອຈະຫລີກຈາກຄວາມກົດດັນຂອງໂລກນີ້, ຈົ່ງເຂົ້າໃຈເຫັນວ່າ ພຣະເຈົ້າຊົງສະຖິດຢູ່ກັບພວກເຮົາ ພຣະອົງນໍາພາແລະສົນທະນາກັບພວກເຮົາຢູ່.

ເອລີຢາ ລໍຖ້າເພື່ອຈະໄດ້ພົບກັບພຣະເຈົ້າ, ຈຶ່ງມີ**ລົມພະຍຸໃຫຍ່**ພັດມາທາງພູເຂົານັ້ນ, ຕໍ່ມາກໍເກີດມີ**ແຜ່ນດິນໄຫວແລະໄຟໄໝ້**. ຢ່າເຂົ້າໃຈຜິດ ພຣະເຈົ້າບໍ່ໄດ້ສະຖິດຢູ່ໃນພັຍທັມມະຊາດເຫລົ່ານີ້. ພຣະເຈົ້າບໍ່ໄດ້ຍົກຍ້າຍໄປໃນຖ່າມກາງສິ່ງອັສຈັນຕ່າງໆ. ຫລາຍເທື່ອພຣະເຈົ້າໃຫ້ເຮົາຮູ້ວ່າ ພຣະອົງສະຖິດຢູ່ກັບການຮັບໃຊ້ທີ່ງຽບສງັດ, ການເຊື່ອຟັງທີ່ຖ່ອມຕົວ. ພຣະເຈົ້າໄດ້ສະແດງພຣະອົງເປັນ**ສຽງຊັບໃສ່ຫູຢ່າງຄ່ອຍໆ**. ເຮົາໄດ້ຍິນສຽງຂອງພຣະເຈົ້າເໝືອນສຽງທີ່ຊັບໃສ່ຫູຢ່າງຄ່ອຍໆ ໃນຖ່າມກາງຄວາມງຽບສງັດຂອງຫົວໃຈທີ່ຕ້ອງການຟັງນັ້ນ. ໃນເມື່ອເອລີຢາໄດ້ຍິນພຣະສຸຣະສຽງຂອງພຣະເຈົ້າແລ້ວ, **ເພິ່ນໄດ້ເອົາເສື້ອປົກໜ້າໄວ້** ແລະໄດ້**ຢືນຂຶ້ນທີ່ປາກຖໍ້າ**. ຍອມຟັງສຽງຂອງພຣະເຈົ້າທີ່ກໍາລັງແນະນໍາ, ສຽງຂອງພຣະເຈົ້າອາດຈະມາຫາໃນເວລາທີ່ພວກເຮົາບໍ່ຕຽມຕົວ.

## 4. <u>ເຂົ້າພົວພັນຄືນອີກ</u> (1 ກະສັດ 19:15-18)

ເວລາມີຄວາມກົດດັນໃນຊີວິດ ພວກເຮົາພະຍາຍາມຢາກຈະຢູ່ໃນບ່ອນມີສັນຕິສຸກ. ແນວໃດກໍຕາມ ໃນເມື່ອໄດ້ເລີ້ມຕົ້ນໃໝ່ແລ້ວ ພວກເຮົາຕ້ອງການເຂົ້າພົວພັນຄືນອີກກັບການຮັບໃຊ້ພຣະເຈົ້າ.

ພຣະເຈົ້າໄດ້ບອກໃຫ້ເອລີຢາກັບຄືນທາງເກົ່າແລະໄປໃນປ່າດົນຊາຍທີ່ດາມາສກາສ. ພຣະເຈົ້າຍັງບໍ່ທັນສົ່ງເອລີຢາໄປປະເຊີນໜ້າກັບເອເຮບ ແລະເຈຊາເບນເທື່ອ. ການທີ່ພວກເຂົາຈະປະເຊີນໜ້າກັນນັ້ນກໍຈະມີຂຶ້ນໃນໄວໆ ນີ້. ພຣະເຈົ້າມີທຸຣະສໍາລັບຜູ້ປະກາດພຣະທັມຂອງພຣະອົງກ່ອນ. ພຣະເຈົ້າໄດ້ປະທານຈຸດປະສົງໃໝ່, ພຣະສັນຍາໃໝ່, ແລະຫົນທາງໃໝ່ແກ່ເອລີຢາ. ຈຸດປະສົງໃໝ່ຂອງເອລີຢາຄືສະຖາປະນາຜູ້ນໍາສາມຄົນໃນອະນາຄົດ. **ເຮຊາເອນ** ເປັນກະສັດປົກຄອງເມືອງ **ອາແຣມ** ຫລືຊີເຣັຽ. **ເຢຮູ** ເປັນກະສັດປົກຄອງອິສຣາເອນ. **ອີລີຊາ** ເປັນຜູ້ປະກາດພຣະທັມ

ແທນບ່ອນຂອງເອລີຢາ. ພຣະເຈົ້າໄດ້ສັນຍາກັບເອລີຢາວ່າພຣະອົງຈະປະກອບເອົາຜູ້ນຳທີ່ຈະນຳເອົາຊະນະຕໍ່ສັດຕຣູ. ດ້ວຍຄຳໝັ້ນສັນຍາຂອງພຣະເຈົ້າ ພວກເຮົາສາມາດທຳລາຍຊີວິດທີ່ໝົດກຳລັງໃຈ ແລະກັບເຂົ້າພົວພັນຄືນອີກໃນການຮັບໃຊ້ພຣະເຈົ້າ.

ພຣະເຈົ້າໄດ້ໃຫ້ ເອລີຢາ ມີທິດທາງໃໝ່. ເອລີຢາ ຄິດວ່າມີແຕ່ຕົນເອງເທົ່ານັ້ນສັດຊື່ຕໍ່ພຣະເຈົ້າ. ພຣະເຈົ້າໄດ້ບອກເພີ່ມວ່າ ຍັງມີອີກ **7000 ຄົນໃນອິສຣາເອນ**ທີ່ບໍ່ຍອມຂາບໄຫວ້**ພຣະບາອານ.** ໃນເມື່ອທ່ານໄດ້ພົບກັບການໝົດກຳລັງໃຈ ໃຫ້ທ່ານຊອກຫາວິທີເລີ້ມຕົ້ນຂຶ້ນໃໝ່, ແລະຍອມຮັບເອົາທິດທາງໃໝ່ຈາກພຣະເຈົ້າ. ແລະຂໍໃຫ້ເຂົ້າພົວພັນຄືນອີກກັບຈຸດປະສົງທີ່ພຣະເຈົ້າມີໄວ້ໃຫ້, ຈົ່ງຮູ້ເຫັນວ່າພຣະອົງຈະຢູ່ກັບເຮົາ ແລະຮ່ວມທຳພາຣະຕ່າງໆກັບພວກເຮົາສເມີໄປ.

**ບົດຮຽນຊີວິດ**

ທ່ານກຳລັງປະສົບກັບຄວາມໝົດກຳລັງໃຈບໍ່? ພຣະເຈົ້າມີພຣະປະສົງແລະແຜ່ນການດີສຳລັບທ່ານ-ເປັນແຜນການທີ່ເຕັມໄປດ້ວຍຄວາມຫວັງ ແລະມີອະນາຄົດແຈ່ມໃສດີ. ໃຫ້ເອົາຄວາມຈິງໃນຊີວິດຂອງຜູ້ປະກາດພຣະທັມເອລີຢານີ້ມາໃຊ້ໃນຊີວິດ:

- ຈົ່ງຮູ້ເຫັນວ່າພຣະເຈົ້າກໍຍັງເປັນພຣະເຈົ້າຢູ່ ເຖິງແມ່ນວ່າທ່ານກຳລັງປະສົບກັບຄວາມນ້ອຍເນື້ອຕ່ຳໃຈ.
- ເລີ້ມຕົ້ນໃໝ່ໃນຝ່າຍຮ່າງກາຍ, ຈິດໃຈ, ຄວາມນຶກຄິດ ເພື່ອຈະຕຽມຕົວພົບກັບການເລີ້ມຕົ້ນໃໝ່ຈາກພຣະເຈົ້າ.
- ໃຫ້ປະເມີນຜົນຄືນກັບສະພາບຂອງທ່ານໃນລັກສະນະຂອງພຣະເຈົ້າ.
- ໃຫ້ເລີ້ມພົວພັນຄືນໃນຊີວິດ ແລະການຮັບໃຊ້ ໂດຍການຍອມຮັບເອົາຈຸດປະສົງ ໄວ້ວາງໃຈໃນພຣະສັນຍາຂອງພຣະເຈົ້າ.

ຈຳເອົາໄວ້ວ່າ ນິມິດໃໝ່ຈາກພຣະເຈົ້າແລະຈຸດປະສົງໃໝ່ຂອງພຣະອົງຊ່ອຍພວກເຮົາໃຫ້ມີກຳລັງໃຈ ເພື່ອໃຫ້ມີຄວາມຫວັງ ແລະມີກຳລັງໃນອະນາຄົດເພື່ອການຮັບໃຊ້.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.